- ກອງທຶນ ຄູ່ຮ່ວມງານ ODA (ການປະກອບສ່ວນ ຂອງລັດຖະບານ ລາວ ຕໍ່ກັບ ໂຄງການ ODA)

- ປະເດັນ

ໂດຍຜ່ານຮ່ວມມື ກັບ DPI ແລະ ພະແນກ ການອ້ອມຂ້າງກະຊວງ ໃນ 4 ແຂວງ[1] ລວມທັງ ບັນດາແຂວງທົດລອງ, ແລະ ປຶກສາກັບ ຜູ້ໃຫ້ທຶນຕົ້ນຕໍ, ພີແສັບ2 ໄດ້ລະບຸບັນຫາຕ່າງໆ ດັ່ງຕໍ່ໄປນີ້ ທີ່ມີຢູ່ໃນຂະບວນການປັດຈຸບັນ ໃນການນຳໃຊ້ ສຳລັບ ກອງທຶນ ຄູ່ຮ່ວມງານ , ເຊິ່ງແມ່ນ ການປະກອບສ່ວນ ຂອງລັດຖະບານ ຕໍ່ກັບບັນດາໂຄງການ ODA.

1) ທຸກໆ ປີ, ຈຳນວນງົບປະມານ PIP ທີ່ສະເໜີ ແມ່ນກ່າຍ ງົບປະມານ. ດັ່ງນັ້ນ, ຮຽກຮ້ອງໃຫ້ມີກອງທຶນຄູ່ຮ່ວມງານ, ເຖິງວ່າຈະບໍ່ໄດ້ສະເໜີຂໍກໍ່ຕາມ ແຕ່ກໍ່ໄດ້ຮັບບູລິມະສິດເຊັ່ນກັນ.
2) ເຈົ້າຂອງໂຄງການ ອາດຈະພາດໂອກາດ ໃນການສະເໜີ ກອງທຶນ ຄູ່ຮ່ວມງານ ຍ້ອນເຂົາເຈົ້າບໍ່ໄດ້ຮັບຂໍ້ມູນ ທີທັນກັບສະພາບ ກ່ຽວກັບ ໂຄງການ ODA.
3) ມີຄວາມຫຍຸ້ງຍາກ ໃນການວາງບູລິມະສິດ ລະຫວ່າງ ໂຄງການ ODA ແລະ ໂຄງການ PIP ຍ້ອນວ່າບໍ່ມີວິທີການທີ່ຄົບຖ້ວນ ໃດເທື່ອທີ່ໄດ້ຮັບການພັດທະນາຂຶ້ນ ເພື່ອການ ວາງບູລິມະສິດ ໂຄງການ ODA..

- ແນວຄວາມຄິດ ພື້ນຖານ

ນີ້ແມ່ນແນວຄວາມຄິດ ໃນການແກ້ໄຂບັນຫາ ໃນຂະບວນການ ກອງທຶນ ຄູ່ຮ່ວມງານ.

1) ***ລະບົບທີ່ຄົບຖ້ວນ ໃນການຈັດວາງບູລິມະສິດ ບັນດາໂຄງການ PIP:*** ໃນ ສປປ ລາວ, ໂຄງການທີ່ໄດ້ຮັບທຶນຈາກ ODA ໄດ້ຮັບການຍອມຮັບວ່າເປັນໂຄງການທີ່ເປັນບູລິມະສິດ, ເຊິ່ງກໍ່ສົມເຫດສົມຜົນຍ້ອນວ່າເປັນໂຄງການທີ່ມີປະສິດທິຜົນ ແລະ ມີຜົນກະທົບອັນໃຫຍ່ຫຼວງ. ໃນຂະນະທີ່, ODA ບໍ່ຈຳເປັນຕ້ອງກວມເອົາ ຄວາມຈຳເປັນໂຄງການ ແລະ ຄວາມຈຳເປັນອັນຮີບດ່ວນທັງໝົດ. ບາງເທື່ອມັນອາດຈະບໍ່ເປັນໄປໄດ້ທາງດ້ານ ການເມືອງ ແລະ ເໝາະສົມ ໃນການຈັດລຽງ ODA ແບບດຽວກັນ. ດັ່ງນັ້ນ, ເພື່ອຈັດລຽງບູລິມະສິດໂຄງການ ໃນຂັ້ນຕອນທັງໝົດ ຂອງການສະເໜີ ງົບປະມານ PIP, ພີແສັບ2 ຈະປັບປຸງ ວິທີການ ການປະເມີນແບບສົມທຽບ (CompAss) ທີ່ໄດ້ຮັບການພັດທະນາຂຶ້ນ ໃນ ພີແສັບ1.

2) ***ລະບົບການແບ່ງປັນຂໍ້ມູນ ODA ແບບງ່າຍດາຍ ແລະ ນຳໃຊ້ແບບສະດວກສະບາຍ:*** MPI ໄດ້ນຳໃຊ້ຮູບແບບການເກັບກຳ ຂໍ້ມູນຂ່າວສານ ແບບທົດລອງເພື່ອກະກຽມ ບົດລາຍງານ ODA ປະຈຳປີ. ພີແສັບ2 ໄດ້ເຮັດໃຫ້ ຮູບແບບມີຄວາມງ່າຍດາຍຂຶ້ນ ແລະ ສັງລວມເຂົ້າເປັນ ໃບຂໍ້ມູນ ໂຄງການແບບກະທັດຮັດ (SPIS) ແລະ ກະກຽມ ລຳດັບຂອງວຽກ (Workflow) ທີ່ສາມາດນຳໃຊ້ ທັງການກະກຽມບົດລາຍງານ ປະຈຳປີ ແລະ ສະເໜີຂໍ ທຶນຄູ່ຮ່ວມງານ ODA.

[1] ອຸດົມໄຊ, ຄຳມ່ວນ, ສາລະວັນ ແລະ ບໍລິຄຳໄຊ



A part of SPIS format



SPIS workflow

3) ***ຄວາມສາມາດ ການຈັດຕັ້ງປະຕິບັດ ທາງດ້ານການຈັດຕັ້ງ:*** ນະໂຍບາຍ ODA, ເລີ່ມຂຶ້ນໃນ ເດືອນ 3 2009, ໄດ້ແຕ່ງຕັ້ງ MPI ໃນການຈັດຕັ້ງຂ່າວສານ ແລະ ປະສານສົມທົບ ກັບ ການຈັດຕັ້ງປະຕິບັດໂຄງການ ODA. ດັ່ງນັ້ນ, SPIS ຈະມີບົດບາດ ທາງກົດໝາຍ ເຊິ່ງເປັນສ່ວນໜຶ່ງຂອງນະໂຍບາຍ.

4) ***ທັດສະນະ ໃນການສະໜັບສະໜູນ ການຈັດຕັ້ງນະໂຍບານ ປະຊາທະປະໄຕ:*** ເຄື່ອງມື ການຄຸ້ມຄອງ ຂ້າງເທິງ ບໍ່ໄດ້ມີຄວາມໝາຍພຽງແຕ່ເຮັດໃຫ້ກິດຈະກຳ ມີຄວາມງ່າຍດາຍ ໂດຍການ ໃສ່ຂໍ້ມູນລົງໃນຮ່າງ. ມັນມີຈຸດປະສົງເພື່ອເຮັດໃຫ້ພະນັກງານ ທີ່ມີໜ້າທີ່ຮັບຜິດຊອບ ການຄຸ້ມຄອງ PIP ເຂົ້າໃຈໂຄງການຂອງເຂົາເຈົ້າ ໄດ້ດີ, ແລະ ເສີມສ້າງຄວາມສາມາດ ຂອງເຂົາເຈົ້າ ໃນການຈັດລຽງ ບູລິມະສິດ ຢ່າງເໝາະສົມ. ນອກເໜືອກວ່ານີ້, ບັນດາເຄື່ອງມື ບໍ່ໄດ້ມີຄວາມໝາຍພຽງ ແຕ່ສະແດງບູລິມະສິດ ໂຄງການຂັ້ນສຸດທ້າຍ ແຕ່ຍັງ ສະໜອງ ຂໍ້ມູນ ເພື່ອການຕັດສິນໃຈ ທາງດ້ານນະໂຍບາຍ ຢ່າງເໝາະສົມຫຼາຍຂຶ້ນ. ບັນດາ ຫຼັກການເຫຼົ່ານີ້ ສະໜັບສະໜູນ ຄວາມພະຍາຍາມ ຂອງລັດຖະບານ ສປປ ລາວ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ ສັງຄົມ 5 ປີ ໃນລັກສະນະ ປະຊາທິປະໄຕ ແລະ ມີປະສິດທິຜົນ.

## ➤ ກິດຈະກຳຕ່າງໆ

ບັນດາເຄື່ອງມື ທີ່ໄດ້ພັດທະນາຂຶ້ນ ໂດຍການຮ່ວມມື ກັບສະມາຊິກພະນັກງານ ຄູ່ຮ່ວມງານ ຈາກ ພະແນກ ການຮ່ວມມືສາກົນ (DIC)ແລະ ພະແນກ ປະເມີນຜົນ (DOE) ແລະ ພະແນກ ແຜນການ (DOP) ຂອງ MPI ຕາມຂັ້ນຕອນດັ່ງນີ້: 1) ການວິເຄາະບັນຫາ ແລະ ທຳຄວາມ ເຂົ້າໃຈເຊິ່ງກັນ ແລະ ກັນ ລະຫວ່າງ ບັນດາຜູ້ກ່ຽວຂ້ອງ; 2) ການສຳຫຼວດ ສະພາບການ ເພີ່ມເຕີມ; 3) ສ້າງໂຄງສ້າງ ສະຖານະການປັດຈຸບັນ ແລະ ກຳນົດບັນຫາ; 4) ການວິເຄາະ ສະຖານະການ ພາຍນອກ; 5) ການປັບປຸງຂັ້ນຕອນ ວຽກງານ;



Workshop in Saravane province

ແລະ 6) ການພັດທະນາ ຫຼັກສູດ ການຝຶກອົບຮົມ. ໃນຂະບວນການນີ້, ກອງປະຊຸມ ພາກປະຕິບັດ ໃນ 4 ແຂວງ, ການສຳພາດ ຜູ້ທີ່ເປັນຜູ້ຕົ້ນຕໍ ແລະ ການແລກປ່ຽນ ທັດສະນະ ກັບ ອົງການຜູ້ໃຫ້ທຶນ ຕົ້ນຕໍ ໄດ້ຈັດມີຂຶ້ນ ເພື່ອທຳຄວາມເຂົ້າໃຈເຊິ່ງກັນ ແລະ ກັນ, ແລະ ລະບຸ ແລະ ກວດກາຄືນ ບັນຫາ. ຊ່ຽວຊານ ໄຈກາ ເປັນຜູ້ນຳພາ ໃນການພັດທະນາ ເຄື່ອງມື ທີ່ຈຳເປັນ ແລະ ຫຼັກສູດ ການຝຶກອົບຮົມ.